# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ

# ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນອາທິດ ວັນທີ 19 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດຖະແຫຼງຂ່າວ ຂອງຄະນະສະເພາະກິດ **ປະຈຳວັນອາທິດ ວັນທີ 19 ກັນຍາ ປີ 2021**.

ພວກຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ພ້ອມດ້ວຍ ທ່ານ ພູວົງ ວົງຄຳຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນ ຈະຖະແຫຼງຂ່າວ ກ່ຽວກັບຄຳສັ່ງເລກທີ່ 016/ສພກ ຂອງເຈົ້າຄອງນະຄອນຫຼວງວຽງຈັນ ແລະ ສະພາບໂຄວິດ-19 ຢູ່ ສປປ ລາວ, ໃນທົ່ວໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

- **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 19 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **5,318** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **371** ຄົນ:

- **ກໍລະນີນໍາເຂົ້າ ມີ 68 ຄົນ** ຈາກ ແຂວງ ສະຫວັນນະເຂດ 42 ຄົນ, ສາລະວັນ 13 ຄົນ, ຈໍາປາສັກ 10 ຄົນ, ນະຄອນຫຼວງວຽງຈັນ 2 ຄົນ ແລະ ຄໍາມ່ວນ 1 ຄົນ ເຊິ່ງກວດພົບຈາກ ແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກຕ່າງປະເທດ ເຂົ້າມາຕາມຈຸດຜ່ານແດນສາກົນ.
- **ສໍາລັບ ການຕິດເຊື້ອໃນຊຸມຊົນ ມີ 303 ຄົນ ລາຍລະອຽດ ດັ່ງຕໍ່ໄປນີ້:**
    - **ນະຄອນຫຼວງ 225 ຄົນ ລາຍລະອຽດຄື:**

1). ກຸ່ມ ໂຮງງານ ອານພີ ລາວ (ເກັບຕົວຢ່າງໃນໂຮງງານ) ໃຫ້ຜົນບວກ 179,

positive rate 31% (179/560).

2). ໂຄງການສຶກສາ LACOVISS: ມີ 07 ຄົນ

- ຈາກ ບ້ານ ໜອງທາເໜືອ, ເມືອງ ຈັນທະບູລີ 03 ຄົນ ຊຶ່ງ ເປັນສະມາຊິກຄອບຄົວດຽວກັນ ທີ່ຕິດເຊື້ອຊຶ່ງໄດ້ລາຍງານ ວານນີ້.

- ຈາກບ້ານ ໜອງຈັນ, ເມືອງ ສີສັດຕະນາກ 03 ຄົນເປັນສະມາຊິກຄອບຄົວດຽວກັນ ທີ່ຕິດເຊື້ອ ຊຶ່ງໄດ້ລາຍງານ ວານນີ້.

- ບ້ານ ໜອງແຕ່ງ 01 ຄົນ (ພະນັກງານ)

3). ຈຸດເກັບ ຕົວຢ່າງ ຈາກບຶງຂະຫຍອງ : ໃຫ້ຜົນບວກ 15 ຄົນ

- ອານພີ ລາວ 04 ຄົນ

- ກົມແຜນທີ່ທະຫານ 01 ຄົນ

- ຄະນະ ພົວພັນຕ່າງປະເທດ 01 ຄົນ

- ໂຮງງານ ຊີເຄແອວ 02 ຄົນ

- ຕະຫລາດ ດົງໝາກຄາຍ 02

- ຕະຫລາດ ສີ ເກີດ 01 ແລະ ລັດວິສະຫະກິດ ການບິນລາວ 01

4). ກຸ່ມໄປກວດຢູ່ ໂຮງໝໍເສດຖາ: ມີ  07 ກໍລະນີ;ຊຶ່ງມາຈາກ :

- ບ້ານ ໂນນຄໍ້ 04 ຄົນ (ເປັນຄອບຄົວດຽວກັນ)

- ບ້ານ ທາດຫລວງໃຕ້ 04 ຄົນ

- ບ້ານ ດົງຄຳຊ້າງ 01 ຄົນ

5). ກຸ່ມໄປກວດຢູ່ໂຮງໝໍ 103 : ມີ 03 ຄົນ ( ຈາກດອນໜູນ 01 ແລະ ໜອງດ້ວງ 02)

- ຈາກຂໍ້ມູນ ຂ້າງເທິງ ຂອງການລາຍມື້ນີ້ ມີຜູ້ຕິດເຊື້ອຈາກ ໂຮງງານຕັດຫຍິບ ອານພິລາວ ທັງໝົດ 182. ມາຮອດປະຈຸບັນ ຕົວເລກສະສົມຜູ້ຕິດເຊື້ອທັງໝົດ 436 ຄົນ (ໃນຈຳນວນຕົວຢ່າງ 1275 ຕົວຢ່າງ ທີ່ເກັບ.

- **ຄຳມ່ວນ 27 ຄົນ:**
- **ຈຳປາສັກ 26 ຄົນ**
- **ຫຼວງພະບາງ 14 ຄົນ**
- **ບໍ່ແກ້ວ 8 ຄົນ:**
- **ສະຫວັນນະເຂດ 3 ຄົນ:**

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **19,185 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ 4,184 ຄົນ.

➢ **ບ້ານໃໝ່ທີ່ກຳນົດເປັນເຂດແດງ ໃນນະຄອນຫຼວງວຽງຈັນ ມີ ... ບ້ານ:**

- **ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19** ສຳລັບ **ນະຄອນຫຼວງວຽງຈັນ** ຢູ່ **ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນຕິດເຊື້ອ.
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະ

ຖານທີ່ທີ່ກຳນົດໄວ້ ຫຼື ທີມງານໜ່ວຍເຄື່ອນທີ່ ທີ່ລົງເກັບຕົວຢ່າງ ໃນເຂດທີ່ມີການລະບາດໃນຊຸມຊົນ.

- ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 18 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **1,522** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **122** ສູນ ແລະ **55** ໂຮງແຮມ, ມີຜູ້ຈຳກັດບໍລິເວນ **7,111** ຄົນ.

- **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ **228,754,790** (371,977 ໃໝ່), ເສຍຊີວິດທັງໝົດ **4,698,031** (5,657 ໃໝ່), ປ ິ່ນປົວ

ຫາຍດີ **205,383,026** (463,104 ໃໝ່). ສໍາລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ **ສະຫະລັດອາເມລິກາ, ອິນເດຍ** ແລະ **ບຣາຊິວ.**

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

- ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ **ປະເທດໄທ** ເຊິ່ງມີຜູ້ຕິດເຊື້ອໃໝ່ **14,109** ຄົນ ແລະ ເສຍຊີວິດໃນມື້ດຽວ **112** ຄົນ, ຮອງລົງມາແມ່ນ **ສສ ຫວຽດນາມ** ມີລາຍງານຜູ້ຕິດເຊື້ອໃໝ່ **9,373** ຄົນ ແລະ ເສຍຊີວິດໃນມື້ດຽວ **220** ຄົນ.

➢ **ຕໍ່ໄປ ຂ້າພະເຈົ້າ ຂໍຮຽນເຊີນ ທ່ານ ພູວົງ ວົງຄໍາຊາວ ຮອງເຈົ້າຄອງນະຄອນຫຼວງວຽງຈັນຖະແຫຼງຂ່າວກ່ຽວກັບຄໍາສັ່ງຂອງທ່ານເຈົ້າຄອງ ຂໍຮຽນເຊີນ:**

- **ທີ່ຈິບໄປແລ້ວນັ້ນ ກໍ່ແມ່ນຄຳສັ່ງຂອງທ່ານເຈົ້າຄອງນະຄອນ ,**

- **ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ປະຈຸບັນ ສັງເກດເຫັນວ່າ ຕົວເລກ ການຕິດເຊື້ອໃນຊຸມຊົນ ຂອງບ້ານເຮົາ ແມ່ນ ສູງກວ່າ ການຕິດເຊື້ອນຳເຂົ້າ ມາໄດ້ຫຼາຍວັນແລ້ວ ສະແດງໃຫ້ເຮົາເຫັນວ່າ ການປະຕິບັດມາດ ຕະການ ອາດຍັງບໍ່ທັນເຄັ່ງຄັດເທົ່າທີ່ຄວນ ຍ້ອນວ່າການລະບາດໃນບ້ານເຮົາພົບສາຍພັນ ເດວຕ້າ ທີ່ມີອັດຕາການແຜ່ເຊື້ອໄດ້ຢ່າງໄວວາ. ພະຍາດໂຄວິດ-19ໄດ້ມີການພັດທະນາ ແລະ ປັບພັນທຸກຳໂຕເອງ ໄປເລື້ອຍໆ, ເຊິ່ງເຮົາພົບໃນປັດຈຸບັນຫຼາຍປະເທດກຳລັງປະເຊີນ ກັບການລະບາດຂອງສາຍພັນ ເດວຕາບວກ (Delta plus) ທີ່ກຳລັງລະບາດໃນຫຼາຍ ປະເທດ ລວມທັງບ້ານເຮົາ, ປະຈຸບັນ Delta plus ນີ້ແມ່ນກວດພົບແລ້ວໃນບ້ານເຮົາ

ໂດຍສະເພາະແມ່ນໃນບັນດາກຸ່ມຄົນທີ່ຕິດພະຍາດໃນເຂດ ນະຄອນຫຼວງວຽງຈັນ, ສາຍພັນນີ້ ແມ່ນມີຄວາມສາມາດໃນການສິ່ງເຊື້ອ ຈາກຄົນນຶ່ງໄປຫາອີກຄົນໜຶ່ງໄດ້ໄວຂຶ້ນກວ່າສາຍພັນເດວຕາທຳມະດາ ແລະ ສາຍພັນອື່ນໆ.

- ສະນັ້ນ ອີກເທື່ອນຶ່ງ ຮຽກຮ້ອງໃຫ້ບັນດາທ່ານ ປະຕິບັດຕາມມາດຕະການ ຢ່າງເຄັ່ງຄັດ ເຊັ່ນ: ບໍ່ໃຫ້ໂຮມຊຸມນຸມ, ບໍ່ຊຸມແຊວກັນເປັນກຸ່ມ, ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ການຮັກສາໄລຍະຫ່າງ, ໃສ່ຜ້າອັດປາກ-ດັງ, ລ້າງມືເລື້ອຍໆດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70% ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ, ອະນາໄມຂ້າເຊື້ອຈຸດສ່ຽງ ເຊັ່ນ ຣາວຂັ້ນໃດ - ບ່ອນຈັບປະຕູ - ລີໂມດ ອື່ນໆ, ຖ້າຫາກທ່ານຮູ້ສຶກວ່າ ເປັນກຸ່ມສ່ຽງຕ້ອງຈຳກັດບໍລິເວນຕົນເອງທັນທີ ພ້ອມທັງໄປກວດຊອກຫາເຊື້ອ, ເຖິງແມ່ນວ່າ ຜົນກວດຈະເປັນລົບ ຍັງຕ້ອງໄດ້ສືບຕໍ່ຈຳກັດບໍລິເວນຕົນເອງ

ຈົນຄົບກຳນົດ 14 ວັນ ຫຼື ຖ້າວ່າມີອາການຜິດປົກກະຕິ ເຊັ່ນ: ໄຂ້, ໄອ, ເຈັບຄໍ, ເຈັບໜ້າເອິກ, ນ້ຳມູກໄຫຼ, ດັງບໍ່ໄດ້ກິ່ນ, ຫຼື ກິນອາຫານບໍ່ໄດ້ລົດຊາດ ໃຫ້ກັບມາກວດຄືນ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳອາທິດ ວັນທີ 19 ກັນຍາ ປີ 2021 ແລະ ການຖະແຫຼງຂ່າວຄຳສັ່ງຂອງເຈົ້າຄອງນະຄອນ ຂອງພວກຂ້າພະເຈົ້າທັງສອງ ໄດ້ສິ້ນສຸດລົງພຽງເທົ່ານີ້, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານ ທີ່ໄດ້ຕິດຕາມຮັບຟັງ ແລະ ຮັບຊົມ.**

**(ຂໍຂອບໃຈ)**